ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ 03 /ຈນວ

ລົງວັນທີ 17 APR 2017

## ຄຳສັ່ງ

## ວ່າດ້ວຍການໃຫ້ຢຸດຕິການດຳເນີນກິດຈະການ ຮ້ານບັນເທີງ Gold Star ( ດາວຄຳ )

ເຖິງ: - ທ່ານຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ.

- ທ່ານຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ.
- ທ່ານເຈົ້າເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ.
- ທ່ານຜູ້ອຳນວຍການໂຮງແຮມດາວຄຳ.

- ອີງຕາມ ກົດໝາຍວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 32/ສພຊ, ລົງວັນທີ 24 ກໍລະກົດ 2013;

- ອີງຕາມ ການຊີ້ນຳຂອງກອງປະຊຸມຄະນະປະຈຳພັກນະຄອນຫຼວງວຽງຈັນ ຄັ້ງທີ 33 ສະໄໝທີ VI ລົງວັນທີ 16 ກຸມພາ 2017;

- ອີງຕາມ ບົດລາຍງານຜົນການກວດກາ ຂອງຄະນະກຳມະການສະເພາະກິດ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ ຮ່ວມກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 0307/ຖວທ.ນວ, ລົງວັນທີ 24 ມີນາ 2017.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຄຳສັ່ງ ດັ່ງນີ້:

1). ໃຫ້ຢຸດຕິການເຄື່ອນໄຫວດຳເນີນກິດຈະການ ຮ້ານບັນເທີງ Gold Star ຊຶ່ງເປັນໜຶ່ງໃນກິດຈະການຂອງໂຮງແຮມດາວຄຳ ທີ່ມີທີ່ຕັ້ງຢູ່ບ້ານນາຄຳ, ເມືອງສີໂຄດຕະບອງ ອັນມີເຫດຜົນຈາກກິດຈະການຮ້ານບັນເທີງນີ້ບໍ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວໃໝ່ເທື່ອ ຍ້ອນຍັງມີຄະດີຄວາມຢູ່ໃນຂັ້ນສານ, ຊ້ຳພັດຍັງເກີດມີປະກົດການອາລະວາດ ຍິງກັນຕາຍ ໃນຄ່ຳຄືນວັນທີ 14 ກຸມພາ 2017 ແລະ ມອບໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ເປັນເຈົ້າການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້.

2). ໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ເມືອງສີໂຄດຕະບອງ, ກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ ຮ່ວມມືກັບ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ດຳເນີນການກວດກາທັງໝົດກິດຈະການຕ່າງໆຂອງໂຮງແຮມດາວຄຳ ກິດຈະການອັນໃດເຄື່ອນໄຫວຖືກຕ້ອງແລ້ວ ແລະ ກິດຈະການອັນໃດບໍ່ຖືກຕ້ອງ.

3). ມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ, ອົງການປົກຄອງເມືອງສີໂຄດຕະບອງ, ໂຮງແຮມດາວຄຳ ແລະ ທຸກພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ.

4). ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ສິຫຼູນ ສິດທິລືໄຊ

**ບ່ອນສົ່ງ:**

- ເຈົ້າຄອງ-ຮອງເຈົ້າຄອງ ນວ ທ່ານລະ 01 ສະບັບ;
- ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ... 01 ສະບັບ;
- ພະແນກອຸດສາຫະກຳ ແລະ ການຄ້າ ນວ 01 ສະບັບ;
- ພະແນກການເງິນ ນວ 01 ສະບັບ;
- ພະແນກສ່ວຍສາອາກອນ ນວ 01 ສະບັບ;
- ພະແນກແຜນການ ແລະ ການລົງທຶນ ນວ 01 ສະບັບ;
- ອຳນາດການປົກຄອງບ້ານ 01 ສະບັບ;
- ເກັບມ້ຽນສຳເນົາ 02 ສະບັບ.